European Union
ສະຫະພາບ ເອີຣົບ

OXFAM

## ປະກາດຮັບສະໝັກ /Announcement

**<u>ຄູຝຶກຈາກອົງການຈັດຕັ້ງທາງສັງຄົມ</u> ເພື່ອເປັນຄູຝຶກ ແລະ ອຳນວຍຄວາມສະດວກໃນແຜນງານ ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງທາງສັງຄົມ ແລະ ຊາວໜຸ່ມອາສາສະໝັກ ກ່ຽວກັບ ການເຮັດວິໄຈ ແລະ ຮຽນຮູ້ແບບປະຕິບັດຕົວຈິງ.**

### ຄວາມເປັນມາ

ໂດຍໄດ້ຮັບການສະໜັບສະໜູນຈາກສະຫະພາບຢູໂລບ, ອົງການອອັກຟາມ ກຳລັງຈັດຕັ້ງປະຕິບັດ ໂຄງການ ຮ່ວມມືເພື່ອສົ່ງເສີມເສີມການມີສ່ວນຮ່ວມຂອງປະຊາຊົນ. ຈຸດປະສົງຂອງໂຄງການແມ່ນເພື່ອປະກອບສ່ວນສົ່ງເສີມ ພັດທະນາການປົກຄອງທີ່ດີ ແລະ ການບໍລິຫານລັດດ້ວຍກົດໝາຍ ແນໃສ່ພັດທະນາ ສປປ ລາວ ໃຫ້ມີການພັດທະນາທີ່ໝັ້ນຄົງ ແລະ ມີຄວາມຍຸຕິທຳ. ຈຸດປະສົງໂດຍສະເພາະຂອງໂຄງການແມ່ນເພື່ອ: (1) ສ້າງຂີດຄວາມສາມາດໃຫ້ອົງການຈັດຕັ້ງທາງສັງຄົມລາວໃຫ້ສາມາດເຮັດໜ້າທີ່ການປະກອບສ່ວນສົ່ງເສີມ ແລະ ພັດທະນາການປົກປ້ອງສິດຂອງພົນລະເມືອງໂດຍຜ່ານການຈັດກອງປະຊຸມປຶກສາຫາລືແລກປ່ຽນໃນລະດັບນະໂຍບາຍ ແລະ ສົ່ງເສີມຂະບວນການພັດທະນາຢ່າງເປັນເຈົ້າການໃນທ້ອງຖິ່ນ ແລະ ລະດັບຊາດ (2) ປະກອບສ່ວນສົ່ງເສີມການສ້າງຄວາມສາມາດຂອງສະພາປະຊາຊົນຂັ້ນແຂວງໃນການຕິດຕາມການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍ ແລະ ກົດໝາຍໃນລະດັບທ້ອງຖິ່ນ. ໂຄງການຮ່ວມມືເພື່ອສົ່ງເສີມເສີມການມີສ່ວນຮ່ວມຂອງປະຊາຊົນກຳລັງຈັດຕັ້ງປະຕິບັດກິດຈະກຳກອງທຶນຂະໜາດ ນ້ອຍເພື່ອສ້າງຄວາມສາມາດໃຫ້ຊາວໜູ່ມ ແລະ ອົງການຈັດຕັ້ງທາງສັງຄົມພາຍໃນ 9 ແຂວງ ໃນການນຳໃຊ້ເຄື່ອງມື ແລະ ວິທີການສົ່ງເສີມການພັດທະນາແບບມີສ່ວນຮ່ວມຂອງຊຸມຊົນ ເຊັ່ນ: ເຄື່ອງມືການຮຽນຮູ້ແລະການປະຕິບັດຕົວຈິງດ້ານບົດບາດຍິງຊາຍເພື່ອການຮຽນຮູ້ຢ່າງເປັນລະບົບ ແນ່ໃສ່ສ້າງຄວາມເຂັ້ມແຂງໃນລະດັບຄົວເຮືອນ, ແລະ ຊຸມຊົນ ໃນການປະສານງານ-ສື່ສານກັບອຳນາດການປົກຄອງທ້ອງຖິ່ນ ລວມທັງສະພາປະຊາຊົນຂັ້ນແຂວງ.

Background information

With support from the EU, OXFAM is implementing the Partnership for Citizen Engagement (PACE) project. The overall objective of the project is to contribute to good governance and the rule of law as a basis for equitable and inclusive growth and development in Lao PDR. The specific objectives of the project are: (1) The role and capacity of Lao Civil Society Organizations (CSOs) has been strengthened to promote and protect the rights of Lao citizens through policy dialogue and accountability processes at local and national level, and (2): The capacity of the People's Provincial Assemblies (PPAs) has been enhanced to perform oversight of government agencies, programs, activities, policies, and laws implemented at constituency level. The Partnership for Citizen Engagement Project is implementing the small grant projects targeting at youth volunteers and CSOs from 9 provinces in the use and adaptation of participatory methodologies. Gender Action Learning System (GALS) methodologies to enhance citizens participation at the household and community level as well as coordination and communication with local authorities and PPAs.

**Seeking for trainers/facilitators from Civil Society Organizations (CSOs) to facilitate/ conduct training and coaching on the following topics:**

*Note: one organization can apply for more than one topics.*

1. **ຫົວຂໍ້ທີ່ຕ້ອງການຄູຝຶກຫລັກ / Training Topics**

- ອຳນວຍຄວາມສະດວກການເຝິກອົບຮົມ ແລະ ນຳພາການປະເມີນຄວາມຕ້ອງການຂອງຊຸມຊົນ ໂດຍໃຊ້ເຄື່ອງມື ການຮຽນຮູ້ ແລະ ປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ / Facilitate training and coaching to conduct need assessment in local communities by using Gender Action Learning System (GALs), see link ToR (2)
- ການເຮັດວິໃຈແບບປະຕິບັດຕົວຈິງ / Action Research ( Thaiban Research), see link ToR (3)
- ເຕັກນິກການວິເຄາະ ( Power Mapping ) / Power Mapping, see link ToR (3)

- ການອອກແບບສຳຫລວດຄວາມຄິດເຫັນຂອງຊຸມຊົນ / Design on Baseline and End line survey, see link ToR (4)
- ການສື່ສານເພື່ອການພັດທະນາ (ເຕັກນິກການຂຽນເລື່ອງສັ້ນ , ການຖ່າຍພາບ, ການສື່ສານດ້ວຍຮູບພາບ, ໂປສະເຕີ ), ແລະ ການສ້າງວີດີໂອບົດເລື່ອງສັ້ນ / Communication for Development (Story writing technique, Photo taking technique, Photovoice, Poster) and Most Significant Change Vedio , see link ToR (5)
- ການຂຽນບົດສະເຫນີໂຄງການຂະໜາດນ້ອຍ/ Writing project concept note and/or proposal
- ການຝຶກອົບຮົມບໍລິຫານໂຄງການຂະໜາດນ້ອຍ/Small scale project management
- ການຝຶກອົບຮົມ ການສ້າງແຜນການຕິດຕາມ, ປະເມີນຜົນ, ຮຽນຮູ້ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ/ Training on monitoring, evaluation, learning (MEL) and social accountability.

## 2. ໄລຍະເວລາ / Time Frame

- 1/02/2020 – 30/06/2020

## 3. ຂັ້ນຕອນໃນການຮັບສະໝັກ / Application Process

- ອົງການຈັດຕັ້ງທາງສັງຄົມ ທີ່ມີຄວາມສົນໃຈໃນການເປັນຄູຝຶກ ໃນຫົວຂໍ້ດັ່ງກ່າວ ຂຽນ ໜັງສືສະແດງຄວາມສົນໃຈເປັນພາສາ ລາວ ຫລື ອັງກິດ ກ່ຽວກັບປະສົບການທີ່ອົງການຈັດຕັ້ງທາງສັງຄົມຂອງຕົນ ເຄີຍຝຶກໃນຫົວຂໍ້ດັ່ງກ່າວ ພ້ອມດ້ວຍຄ່າຝຶກອົບຮົມຕໍ່ມື້ ເປັນ ເງີນໂດລາ / Interested CSOs can apply by sending their Letter of Interest ( in Lao or English) indicating the experiences in topics with the consultancy fee in daily basis
- ຄັດເລືອກຮອບທີ1ເພື່ອຜ່ານເຂົ້າສຳພາດ / Pre-screening and Shortlist
- ສຳພາດຜູ້ທີ່ຜ່ານການຄັດເລືອກ / Interview
- ແຈ້ງຜົນຂອງການສຳພາດ / Notification of successful application

## 4. ເງື່ອນໄຂຂອງຜູ້ສະໝັກ / Eligibility Criteria

- ອົງການຈັດຕັ້ງທາງສັງຄົມ ( CSOs ) ທີ່ໄດ້ຂື້ນທະບຽນຢ່າງເປັນທາງການ / official registered organization

- ມີປະສົບການເຮັດວຽກພັດທະນາເພື່ອກຸ່ມຄົນດ້ອຍໂອກາດໂດຍສະເພາະ ສິດສະເໝີພາບຍິງ-ຊາຍ, ສິດທິເດັກ, ການສຶກສາ, ສາທາ/ຜູ້ຕິດເຊື້ອ HIV/AIDS, ສິດທິຂອງຄົນພິການ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອື່ນໆ / Experience in development working for disadvantaged groups such as gender and child rights, people with disabilities, access to health (HIV/AIDS), education, natural resource, environment, agriculture and etc.
- ມີປະສົບການໃນການເປັນຄູຝຶກໃນຫົວຂໍ້ ແລະ ການນຳໃຊ້ເຄື່ອງມືຢ່າງໜ້ອຍ 1-2 ປີ ເຊັ່ນ: Gender Action Learning System (GALS), Thaiban Research, Power Mapping , Most Significant Change (MSC) . / At least 1-2 years of experience in facilitating /conducting the training in relevant topics in above

5. **ໜ້າວຽກ:/ Main tasks:**

- ອອກແບບການຮຽນ-ການສອນ ພ້ອມດ້ວຍວິທີການ ແລະ ເຄື່ອງມືປະກອບການຮຽນ-ການສອນ/ Design and develop training materials.
- ໃຫ້ການແນະນຳ ແລະ ນ◌ໍາພາການຈັດຕັ້ງປະຕິບັດຕົວຈິງໃນພາກສະໜາມ / Coaching and taking lead in field activities
- ຕິດຕາມປະເມີນການຮຽນຮູ້ /Monitoring and Evaluation of the Learning
- ໃຫ້ການແນະນຳບັນດາອົງການຈັດຕັ້ງທາງສັງຄົມເປົ້າໝາຍຂຽນບົດສະເໜີໂຄງການຂະໜາດນ້ອຍຕາມຂໍ້ມູນທີ່ໄດ້ຈາກການອົບຮົມ ແລະ ການເຝິກຫັດຕົວຈິງໃນພາກສະໜາມ / Coaching target CSOs in writing small scale project proposal by using information gathered from training and during the field exercise.
- ຂຽນລາຍງານສຸດທ້າຍກ່ຽວກັບຜົນໄດ້ຮັບຈາກຂະບວນການເຝິກອົບຮົມ ແລະ ການເຝິກຫັດຕົວຈິງໃນພາກສະໜາມ / final reporting on outputs/outcome from the training cycle and field practices/coaching

ເປີດຮັບສະໝັກແຕ່ມື້ນີ້ຈົນເຖິງ ວັນທີ່ 23 ມັງກອນ 2020 ເວລາ 5:00 ໂມງແລງ / Please submit your application no later than 23 January 2020 at 5 pm.

ສົນໃຈ ຫລື ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ ເບີໂທ: 021 264 224 ຫຼື ອີເມວ: Recruitment.Laos@oxfam.org

For more information, please contact 021 264 224 or email: Recruitment.Laos@oxfam.org